**ຫົວຂໍ້: "ເສີມຂະຫຍາຍຄຸນຄ່າມໍລະດົກໂລກ ເຂົ້າໃນພັດທະນາເສດຖະກິດ ຢູ່ ສປປ ລາວ"**

ປອ ສີສົມພອນ ວົງພະຈັນ

ການເສີມຂະຫຍາຍຄຸນຄ່າມໍລະດົກໂລກ ເຂົ້າໃນພັດທະນາເສດຖະກິດ ຂອງລາວ ແມ່ນການຂຸດຄົ້ນບັນດາເງື່ອນໄຂການເປັນຕົວແທນມໍລະດົກໂລກ, ຄວາມສົມບູນ ແລະຄວາມເປັນຂອງແທ້ດັ້ງເດີມ ທີ່ມີຢູ່ໃນມໍລະດົກ ເພື່ອພັດທະນາເສດຖະກິດຂອງປະເທດ ໂດຍສະເພາະແມ່ນຂະແໜງບໍລິການ ແລະການທ່ອງ ທ່ຽວທີ່ເປັນຈຸດເດັ່ນໃນຕະຫຼອດໄລຍະຜ່ານມາ ຂອງ ສປປ ລາວ.

**I. ຄວາມຈຳເປັນໃນການເສີມຂະຫຍາຍຄຸນຄ່າມໍລະດົກໂລກເຂົ້າໃນການພັດທະນາເສດຖະກິດ ຢູ່ ສປປ ລາວ.**

ການເສີມຂະຫຍາຍຄຸນຄ່າມໍລະດົກໂລກ ກັບການພັດທະນາເສດຖະກິດ ແມ່ນສາຍພົວພັນແບບກາຍອິນຊີ, ເປັນປັດໃຈ, ເປັນເງື່ອນໄຂ ຊ່ວຍຊູເຊິ່ງກັນ ແລະກັນ ເຊິ່ງປັດຈຸບັນ ຫຼາຍປະເທດໃນໂລກໄດ້ຖືສຳຄັນໂດຍສະເພາະແມ່ນການຂຸດຄົ້ນທ່າງແຮງທາງດ້ານຄຸນຄ່າມໍລະດົກ ຂອງປະເທດ ເພື່ອສ້າງເປັນທ່າ ແຮງໃຫ້ແກ່ການພັດທະນາເສດຖະກິດ-ສັງຄົມ ຂອງປະເທດ, ຂອງທ້ອງຖິ່ນ, ຍົກລະດັບຊີວິການເປັນຢູ່ທາງດ້ານເສດຖະກິດ ຂອງສັງຄົມ, ຂອງຊຸມຊົນ ມີຜົນສຳເລັດເປັນໜ້າເພິ່ງພໍໃຈ. ການຂຸດຄົ້ນທ່າແຮງທາງດ້ານມໍລະດົກໂລກ ຖືເປັນທ່າແຮງໜຶ່ງທີ່ປະເທດລາວ ຈະຕ້ອງໄດ້ຄົ້ນຄວ້າ ແລະກຳນົດແນວທາງໃນການເສີມຂະຫຍາຍເຂົ້າໃນການພັດທະນາເສດຖະກິດ ຂອງລາວ ຢ່າງແຂງແຮງ, ເພາະຄຸນຄ່າມໍລະດົກໂລກເຫຼົ່ານັ້ນເປັນແຫຼ່ງຊັບພະຍາກອນທີ່ສາມາດສ້າງຄຸນຄ່າທາງດ້ານເສດຖະກິດໃຫ້ແກ່ທ້ອງຖິ່ນ ແລະປະເທດຊາດ ຢ່າງຫຼວງຫຼາຍ.

**II. ສະພາບການເສີມຂະຫຍາຍດ້ານຄຸນຄ່າມໍລະດົກໂລກ ເຂົ້າໃນພັດທະນາເສດຖະກິດ ຢູ່ ສປປ ລາວໃນໄລຍະຜ່ານມາ.**

**1.1. ສະພາບຈຸດພິເສດລວມ ຂອງມໍລະດົກໂລກ ຂອງສປປ ລາວ.**

**1.1.1. ຈຸດພິເສດມໍລະດົກໂລກທີ່ເປັນວັດຖຸ ຂອງ ສປປ ລາວ.**

ປັດຈຸບັນ, ສະທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ໄດ້ມີມໍລະດົກໂລກ ທີ່ເປັນວັດຖຸ ທີ່ໄດ້ຮັບການຮັບຮອງຈາກອົງການ ຢູແນັສໂກ ໃນຈຳນວນ 3 ແຫ່ງ ຄື:

1). ມໍລະດົກໂລກເມືອງຫຼວງພະບາງ: ມໍລະດົກໂລກເມືອງຫຼວງພະບາງ ໄດ້ຮັບການຮັບຮອງຈາກອົງການ ຢູແນັສໂກ ເປັນເມືອງມໍລະດົກໂລກ ຢ່າງເປັນທາງການໃນກອງປະຊຸມ ຄັ້ງທີ 17 ຂອງ ວັນທີ 9 ທັນວາ 1995 ເນື່ອງຈາກ ເມືອງຫຼວງພະບາງ ເປັນເມືອງທີ່ມີຄວາມໂດດເດັ່ນ ແລະຄົງຄຸນຄ່າທາງດ້ານວັດທະນະທຳ ແລະທຳມະຊາດ ໂດຍຖືກຕາມເງື່ອນໄຂມໍລະດົກໂລກ. ເມືອງຫຼວງພະບາງ ໄດ້ຮັບການຈົດເຂົ້າເປັນມໍລະດົກຂອງໂລກ ພາຍໃຕ້ 3 ເງື່ອນໄຂ ຄື: ເງື່ອນໄຂ (III); ເງື່ອນໄຂ (IV); ເງື່ອນໄຂ (V).

2). ມໍລະດົກໂລກວັດພູຈຳປາສັກ: ມໍລະດົກໂລກວັດພູຈຳປາສັກ ໄດ້ຮັບການຮັບຮອງຈາກອົງການ ຢູແນັສໂກ ເປັນມໍລະດົກໂລກ ຢ່າງເປັນທາງການໃນ ໃນວັນທີ 25 ທັນວາ ປີ 2001 ພາຍໃຕ້ 3 ເງື່ອນໄຂ ຄື: ມາດຖານທີ III; ມາດຖານທີ IV; ມາດຖານທີ VI. ມໍລະດົກໂລກວັດພູຈຳປາສັກ ມີສິ່ງໂດດເດັ່ນທາງດ້ານບູຮານສະຖານ ທີ່ຕັ້ງຢູ່ເທິງເນີນພູ, ເປັນສະ ຖານທີ່ສັກສິດ ແລະອາລິຍະທຳບູຮານເຖິງ 3 ສະໄໝນຳກັນ ຄື: ອານາຈັກເຈນລະ, ອານາຈັກຂອມ ແລະ ອານາຈັກລ້ານຊ້າງ, ມີສະຖາປັດຕະຍະກຳເກົ່າແກ່, ມີອາຄານສ້າງຂຶ້ນໃນສະຕະວັດທີ VI ຊຶ່ງໄດ້ຮັບອິດທິພົນທາງດ້ານວັດທະນະທຳມາຈາກສິລະປະ ຂອມ, ອິນດູ ແລະ ພຸດ.

3). ຄຸນຄ່າມໍລະດົກໂລກໄຫຫີນຊຽງຂວາງ: ມໍລະດົກໂລກໄຫຫີນຊຽງຂວາງ ໄດ້ຖືກຮັບຮອງເປັນມໍລະດົກໂລກຈາກອົງການຢູເນັດສໂກ ໃນວັນທີ 10 ກໍລະກົດ 2019 ເຊິ່ງເປັນມໍລະດົກໂລກທາງດ້ານວັດທະນະທຳ ໂດຍຖືກຮັບຮອງຕາມເງື່ອນໄຂທີ III ພຽງເງື່ອນໄຂດຽວ. ເປັນຕົ້ນແມ່ນສາມາດຢືນຢັນເຖິງການຕັດຫີນ, ການຜະລິດ, ການເຄື່ອນຍ້າຍ ແລະການນຳໃຊ້ໄຫຫີນໃນຊ່ວງໄລຍະເວລາອັນຍາວນານ ຂອງປະຫວັດສາດວັດທະນະທຳໃນພາກພື້ນອາຊີຕາເວັນອອກສ່ຽງໃຕ້.

**1.1.2. ຈຸດພິເສດມໍລະດົກໂລກທີ່ບໍ່ເປັນວັດຖຸ ຂອງ ສປປ ລາວ.**

ມໍລະດົກໂລກທີ່ບໍ່ເປັນວັດຖຸຂອງລາວ ໄດ້ຮັບຮອງຈາກອົງການ ຢູແນັສໂກ ເຊິ່ງໄດ້ມີຄຸນຄ່າທາງດ້ານຈິດໃຈ, ມັນໄດ້ບົ່ງບອກເຖິງຄຸນຄ່າທາງດ້ານສະຕິປັນຍາ, ຫົວຄິດປະດິດສ້າງ ແລະອະລິຍະທຳ ຂອງມວນມະນຸດ ກໍຄື ຄົນລາວ, ສາມາດສ້າງຜະລິດຕະພັນວັດທະນະທຳທີ່ມີຄຸນຄ່າອັນສູງສົ່ງລະດັບຈັກກະວານ ເຊິ່ງປະກອບມີ 3 ລາຍການ ຄື:

1). “ສຽງແຄນລາວ” ໄດ້ຮັບການຮັບຮອງຈາກອົງການ ຢູແນັສໂກ ເປັນສຽງແຄນມໍລະດົກໂລກ ຢ່າງເປັນທາງການໃນ ວັນທີ 7/12/2017; ສຽງແຄນລາວແມ່ນສຽງດົນຕີທີ່ເກີດມາຈາກແຄນ ແລະ ແຄນ ໄດ້ປະດິດສ້າງຂຶ້ນດ້ວຍສະຕິປັນຍາ ຂອງມວນມະນຸດ ກໍຄືຄົນລາວ; ແຄນໄດ້ເປັນເຄື່ອງດົນຕີຫຼັກສະນິດໜຶ່ງ ຂອງສິລະປະດົນຕີ ຂອງປະຊາຊົນລາວບັນດາເຜົ່ານັບແຕ່ເໜືອເຖິງໃຕ້ ປະກອບດ້ວຍ ແຄນ 4 ຄູ່, ແຄນ 5 ຄູ່, ແຄນ 6 ຄູ່, ແຄນ 7 ຄູ່, ແຄນ 8 ຄູ່. ແຄນລາວ ເຮັດດ້ວຍ ໄມ້ອໍ້, ໄມ້ເຮ້ຍ, ສຽງແຄນ ເມື່ອເປົ່າປະສານໃສ່ກັນຫຼາຍດວງ ຍິ່ງເຮັດໃຫ້ມີສະເໜ່, ອອນຊອນ ແລະໃຊ້ເສບໃນງານບຸນປະເພນີໃນລະດັບຕ່າງໆ, ເສບເຂົ້າກັບບົດຂັບ ບົດ ລຳ ແລະສາມາດເສບເຂົ້າກັບເຄື່ອງດົນຕີສະນິດອື່ນໄດ້.

2). “ລາຍນາກ” ໄດ້ຮັບການຮັບຮອງເປັນມໍລະດົກໂລກ ໃນຄັ້ງວັນທີ 6 ທັນວາ 2023 ເຊິ່ງອົງການຢູແນັສໂກ ໄດ້ປະກາດການຮັບຮອງ “ລາຍນາກ” ໃນຜ້າພື້ນເມືອງລາວ ເປັນມໍລະດົກທາງວັດທະນະທຳ ທີ່ບໍ່ສາມາດຈັບຕ້ອງໄດ້. ລາຍນາກ ເປັນລາຍທີ່ໂດດເດັ່ນອັນດັບໜຶ່ງໃນຜ້າແພລາວ ທີ່ຖືກປະດິດຄິດສ້າງຂຶ້ນດ້ວຍຈິດສຳນຶກ ແລະສິລະປະອັນປານີດຂອງຄົນລາວ ໄດ້ຕິດພັນກັບການດຳລົງຊີວິດ ຂອງຄົນລາວມາແຕ່ສະໄໝບູຮານ; ລາຍນາກລາວ ຕິດພັນກັບຄວາມເຊື່ອຖື ຂອງຄົນລາວທີ່ເຊື່ອກັນວ່າ ພະຍານາກ ແມ່ນສິ່ງສັກສິດທີ່ຄອຍປົກປັກຮັກສາ ໃຫ້ຄວາມຢູ່ເຢັນເປັນສຸກ ປາສະຈາກສິ່ງທີ່ບໍ່ດີ.

3). ລຳວົງລາວ ໄດ້ຮັບການຮັບຮອງຈາກອົງການ ຢູແນັສໂກ ເປັນມໍລະດົກໂລກ ຢ່າງເປັນທາງການ ໃນ ວັນທີ 5/12/2024 ເຊິ່ງ ລຳວົງລາວ ໄດ້ຕິດພັນກັບວິຖີຊີວິດຂອງຄົນລາວ ເພື່ອເປັນການສ້າງໂອກາດໃນການພົບປະເຊິ່ງກັນ ແລະກັນ, ສະແດງອັດທະນາໃສ, ອາລົມຈິດ, ຄວາມໂອບເອື້ອ, ຮັກແພງ ແລະໃຫ້ກຽດເຊິ່ງກັນແລະກັນ; ສ້າງໃຫ້ຈິດໃຈເບີກບານມ່ວນຊື່ນ, ຜ່ອນຄາຍຄວາມຄຽດ, ເປັນການສົ່ງເສີມສຸຂະພາບຈິດ ແລະຮ່າງກາຍ; ຍັງເປັນການສະໜັບສະໜູນສິດທິຂັ້ນພື້ນຖານ ແລະຄວາມສະເໝີພາບຍິງ-ຊາຍ, ເພດ, ໄວ, ສັນຊາດ, ເຊື້ອຊາດ, ເຜົ່າ, ສະສະໜາ. ບົດຟ້ອນລຳລົງລາວ ປະກອບມີ 8 ທ່າ ຄື: ທ່າຟ້ອນລຳວົງ ຈັງຫວະເຊີນຊວນ, ທ່າຟ້ອນລຳວົງ ຈັງຫວະລຳສີພັນດອນ, ທ່າຟ້ອນ ລຳວົງ ຈັງຫວະຕັ້ງຫວາຍ, ທ່າຟ້ອນລຳວົງ ຈັງຫວະຂັບທຸ້ມຫຼວງພະບາງ, ທ່າຟ້ອນລຳວົງ ຈັງຫວະສະຫຼັບຟັນປາ, ທ່າຟ້ອນລຳວົງ ຈັງຫວະລຳຄອນສະຫວັນ, ທ່າຟ້ອນລຳວົງ ຈັງຫວະລຳມະຫາໄຊ.

**1.2. ແນວທາງນະໂຍບາຍ ຂອງພັກ-ລັດ ຮັບປະກັນໃຫ້ແກ່ການເສີມຂະຫຍາຍຄຸນຄ່າມໍລະດົກໂລກເຂົ້າໃນການພັດທະນາເສດຖະກິດ ຢູ່ ສປປ ລາວ.**

ພັກ ແລະລັດຖະບານ ໄດ້ຖືສຳຄັນ ແລະມີທິດໃນການສົ່ງເສີມຄຸນຄ່າມໍລະດົກໂລກ ດ້ວຍແນວທາງ ແລະນະໂຍບາຍຕ່າງໆ ເພື່ອສະນັບສະໜູນ ແລະເສີມຂະຫຍາຍຄຸນຄ່າມໍລະດົກໂລກ ໃຫ້ສາມາດປະກອບສ່ວນເຂົ້າໃນພັດທະນາພື້ນຖານເສດຖະກິດ ຂອງປະເທດ; ກາຍເປັນພາກສ່ວນເສດຖະກິດ ທີ່ນອນໃນໂຄງປະກອບເສດຖະກິດແຫ່ງຊາດ ແລະຮັບປະກັນໃຫ້ແກ່ການພັດທະນາແບບຍືນຍົງ. ເປັນຕົ້ນພັກໄດ້ຊີ້ນຳ ຕ້ອງໄດ້ສຸມໃສ່ “ທັງປົກປັກຮັກສາ, ທັງສ້າງ ແລະເສີມຂະຫຍາຍມໍລະດົກ ແລະຄຸນຄ່າວັດທະນະທຳຂອງຊາດ, ຂອງເຜົ່າ ໃຫ້ເປັນມໍລະດົກລະດັບທ້ອງຖິ່ນ, ລະດັບຊາດ ແລະມໍລະດົກໂລກ” ແລະກອງປະຊຸມໃຫຍ່ ຄັ້ງທີ XI ຂອງພັກ ກໍໄດ້ເນັ້ນວ່າ: “ລັດຕ້ອງມີຍຸດທະສາດພັດທະນາວັດທະນະທຳຢ່າງຈະແຈ້ງ ໂດຍຕິດພັນກັບການອະນຸລັກຟື້ນຟູບັນດາມໍລະດົກວັດທະນະທຳທາງວັດຖຸ ແລະບໍ່ແມ່ນວັດຖຸ ລວມທັງວັດຖຸບູຮານ ແລະຮ່ອງຮອຍປະຫວັດສາດ” ແລະລັດຍັງໄດ້ມີລະບຽບ ກົດໝາຍ ເພື່ອເປັນບ່ອນອີງໃນການຄຸ້ມຄອງການເຄື່ອນໄຫວວຽກງານທີ່ຕິດພັນກັບມໍລະດົກ; ເປັນຕົ້ນ ລັດຖະທຳມະນູນແຫ່ງ ສປປ ລາວ ໄດ້ກຳນົດວ່າ: “ລັດສົ່ງເສີມການອະນຸລັກວັດທະນະທຳທີ່ເປັນເອກະລັກ ແລະເປັນມູນເຊື້ອອັນດີງາມຂອງຊາດ ແລະຂອງຊົນເຜົ່າ ສົມທົບກັບການຮັບເອົາວັດທະນະທຳ ຂອງໂລກຢ່າງມີການເລືອກເຟັ້ນ. ລັດສົ່ງເສີມການເຄື່ອນໄຫວວັດທະນະທຳ, ສິນລະປະວັນນະຄະດີ, ການປະດິດຄິດແຕ່ງ, ຄຸ້ມຄອງ ແລະປົກປັກຮັກສາມໍລະດົກທາງດ້ານ ວັດທະນະທຳ, ປະຫວັດສາດ ແລະທຳມະຊາດ, ບູລະນະ, ປະຕິສັງຂອນວັດຖຸບູຮານ ແລະປູຊະນີຍະສະຖານ...”

**1.3. ເສີມຂະຫຍາຍຄຸນຄ່າມໍລະດົກໂລກ ເຂົ້າໃນການພັດທະນະເສດຖະກິດ.**

ເສີມຂະຫຍາຍບັນດາຄຸນຄ່າ ຂອງມໍລະດົກໂລກ ຂອງລາວ ດ້ວຍການນຳເອົາມໍລະດົກໂລກ ໃຫ້ສາມາດເຊື່ອມໂຍງກັບຂະແໜງອຸດສາຫະກຳການທ່ອງທ່ຽວ ແລະການບໍລິການ ເຊິ່ງ ປັດຈຸບັນ, ຂະແໜງການທ່ອງທ່ຽວ ໄດ້ຊຸກຍູ້ຂະແໜງການ, ຫົວໜ່ວຍທຸລະກິດ, ຊຸກຍູ້ການລົງທຶນ, ການກໍ່ສ້າງໂຄງລ່າງພື້ນຖານການ

ຜະລິດ, ສ້າງວຽກເຮັດງານທຳໃຫ້ແກ່ສັງຄົມ ແລະ ເປັນຂະແໜງການທີ່ສົ່ງອອກກັບທີ່; ພາໃຫ້ມີການສະສົມ ແລະໝູນວຽນຂອງເງິນຕາພາຍໃນປະເທດ, ກະຈາຍລາຍໄດ້ໄປສູ່ທ້ອງຖິ່ນ. ລັດຖະບານ ໄດ້ສົ່ງເສີມວຽກງານທ່ອງທ່ຽວ ທາງດ້ານທຳມະຊາດ, ວັດທະນະທຳ ແລະ ປະຫວັດສາດ; ຊຸກຍູ້ໃຫ້ປະຊາຊົນມີສ່ວນຮ່ວມເຂົ້າໃນວຽກງານການທ່ອງທ່ຽວ, ສົ່ງເສີມຜະລິດຕະພັນທ່ອງທ່ຽວ, ແຫຼ່ງທ່ອງທ່ຽວ, ສົ່ງເສີມຜະລິດຕະພັນຫັດຖະກຳທີ່ເປັນເອກະລັກທ້ອງຖິ່ນ; ປັບປຸງຮ້ານອາຫານ, ໂຮງແຮມ, ຣີສອດ, ເຮືອນພັກ ໃຫ້ມີຄຸນນະພາບ; ເພີ່ມລາຍການນຳທ່ຽວໃຫ້ມີຫຼາຍຮູບແບບ ແລະຫຼາຍວິທີ, ໂຄສະນາການທ່ອງທ່ຽວ ດ້ວຍຫຼາຍຮູບແບບ ທັງນີ້ກໍເພື່ອຊຸກຍູ້ໃຫ້ວຽກງານທ່ອງທ່ຽວກາຍເປັນຫົວຈັກຂັບເຄື່ອນຂົງເຂດເສດຖະກິດອື່ນ ໃຫ້ມີການຂະຫຍາຍຕົວ ແລະເຮັດການທ່ອງທ່ຽວໄດ້ມີການຂະຫຍາຍຕົວຕໍ່ເນື່ອງ, ຍືນຍົງ. ປັດຈຸບັນ, ບັນດາແຫຼ່ງມໍລະດົກໂລກ ແລະ ລາຍການມໍລະດົກໂລກ ຂອງລາວ ໄດ້ຮັບຄວາມນິຍົມຈາກພາຍໃນ ແລະຕ່າງປະເທດ. 1). **ມໍລະດົກໂລກເມືອງຫຼວງພະບາງ** ອັດຕານັກທ່ອງທ່ຽວເຂົ້າມາທ່ອງທ່ຽວເພີ່ມຂຶ້ນຢ່າງຕໍ່ເນື່ອງ, ເປັນຕົ້ນ ໃນປີ 2018 ມີນັກທ່ອງທ່ຽວ 755,019 ຄົນ; ໃນປີ 2024 ມີນັກທ່ອງທ່ຽວ ລວມທັງໝົດ 2,326,758 ຄົນ. **2). ມໍລະດົກໂລກວັດພູຈຳປາສັກ** ໃນປີ 2001 ມີນັກທ່ອງທ່ຽວ ລວມທັງໝົດ 22,885 ຄົນ, ໃນປີ 2023 ມີນັກທ່ອງທ່ຽວລວມທັງໝົດ 63,020 ຄົນ. **3). ມໍລະດົກໂລກໄຫຫີນຊຽງຂວາງ** ໃນປີ 2018 ມີນັກທ່ອງທ່ຽວ 82,150 ຄົນ , ໃນປີ 2024 ມີນັກທ່ອງທ່ຽວເຂົ້າມາ ລວມທັງໝົດ 43,287 ຄົນ. **4). ມໍລະດົກໂລກທີ່ບໍ່ເປັນວັດຖຸ** ເປັນມໍລະດົກທີ່ມີຄຸນຄ່າທາງດ້ານຈິດໃຈ ຂອງມວນມະນຸດ ເຊິ່ງປະກອບດ້ວຍ ສຽງແຄນລາວ, ລາຍນາກ, ລຳວົງລາວ ໄດ້ປະກອບສ່ວນທັງທາງກົງ ແລະທາງອ້ອມເຂົ້າໃນການພັດທະນາເສດຖະກິດຂອງຊາດ ໂດຍສະເພາະແມ່ນຕິດກັບຂະແໜງເສດຖະກິດການທ່ອງທ່ຽວ ແລະການບໍລິການ ເຊິ່ງ ສຽງແຄນລາວ, ລາຍນາກ ແລະລຳວົງລາວ ແມ່ນໄດ້ຮັບການໂຄສະນາ ດ້ວຍຮູບແບບຕ່າງໆ ໄດ້ດຶງດູດການທ່ອງທ່ຽວ ເພື່ອສ້າງຄວາມເພິ່ງພໍໃຈ, ປັບທັບໃຈ ໃຫ້ຜູ້ຊົມ.

**1.4. ບັນຫາຂໍ້ຈຳກັດໃນການເສີມຂະຫຍາຍດ້ານຄຸນຄ່າມໍລະດົກໂລກເຂົ້າໃນພັດທະນາເສດຖະກິດ ຢູ່ ສປປ ລາວ.**

1). ການໂຄສະນາເຜີຍແຜ່ຂໍ້ມູນ-ຂ່າວສານກ່ຽວກັບແຫຼ່ງມໍລະດົກໂລກ, ລາຍການ ແລະຜະລິດຕະພັນມໍລະດົກໂລກ ເພື່ອເປັນການດຶງດູດຄວາມສົນໃຈ, ຄວາມຕ້ອງການໃນການຊົມໃຊ້ຄຸນຄ່າມໍລະດົກໂລກ ຍັງບໍ່ທັນເຮັດໄດ້ດີ, ຂາດຊີວິດຊີວາ. 2). ຄວາມຮັບຮູ້ ຄວາມເຂົ້າໃຈ ຂອງປະຊາຊົນ ຕໍ່ກັບຄຸນຄ່າທາງມໍລະດົກ ຍັງບໍ່ທັນເລິກເຊິ່ງ ແລະຖືກຕ້ອງ ເຮັດໃຫ້ການມີສ່ວນຮ່ວມ ຂອງຊຸມຊົນ ໃນການປະກອບສ່ວນເຂົ້າໃນການອະນຸລັກ, ປົກປັກຮັກ ສາ ແລະເສີມຂະຫຍາຍຄຸນຄ່າມໍລະດົກໂລກເພື່ອຮັບໃຊ້ເຂົ້າໃນການພັດທະນາເສດຖະກິດ ຍັງບໍ່ທັນເຮັດໄດ້ດີ. 3). ງົບປະມານບູລະນະ, ສ້ອມແປງ ມີຈຳກັດ ແລະ ການພິຈາລະນາງົບປະມານໃນແຕ່ລະໄລຍະຊັກຊ້າ; ວັດຖຸອຸປະກອນທີ່ຈະນຳໃຊ້ເຂົ້າໃນການຟື້ນຟູ-ບູລະນະ, ສ້ອມແປງ ມີລາຄາສູງ ແລະ ຫາຍາກ ເຮັດໃຫ້ການປົກປັກຮັກສາແຫຼ່ງມໍລະດົກ ຍັງເຮັດບໍ່ທັນໄດ້ດີ. 4). ໂຄງລ່າງພື້ນຖານ

ແລະ ສິ່ງອຳນວຍຄວາມສະດວກ ຍັງບໍ່ສະດວກ ແລະ ບໍ່ໄດ້ຮັບການພັດທະ ນາຢ່າງເຕັມສ່ວນໃນດ້ານການທ່ອງທ່ຽວ ເປັນຕົ້ນ: ເສັ້ນທາງເຂົ້າເຖິງແຫຼ່ງມໍລະດົກ ກໍຄືແຫຼ່ງທ່ອງທ່ຽວມໍລະດົກຫຼາຍແຫ່ງ ຍັງຫຍຸ້ງຍາກ, ສາຍການບິນໂດຍກົງກັບ ຕະຫຼາດເປົ້າໝາຍທາງໄກ ແລະຍັງມີໜ້ອຍ. 5). ອົງການການຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານມໍລະດົກໂລກ ຍັງບໍ່ທັນໄດ້ເອົາໃຈໃສ່ຢ່າງຕັ້ງໜ້າ; ພະນັກງານທີ່ເຮັດວຽກງານດັ່ງກ່າວຄວາມຮູ້ຄວາມ ສາມາດ, ຄວາມຮັບຜິດຊອບ ຂອງບາງຄົນບໍ່ທັນສູງ.

**III. ຂໍ້ສະເໜີແນະໃນການເສີມຂະຫຍາຍຄຸນຄ່າມໍລະດົກໂລກທາງດ້ານວັດຖະນະທຳ ເຂົ້າໃນພັດ ທະນາເສດຖະກິດ ຢູ່ ສປປ ລາວ.**

1). ເພີ່ມທະວີໃນການໂຄສະນາເຜີຍແຜ່ຂໍ້ມູນ-ຂ່າວສານກ່ຽວກັບແຫຼ່ງມໍລະດົກໂລກ, ລາຍການ ແລະ ຜະລິດຕະພັນມໍລະດົກໂລກຢ່າງວ້າງຂວາງ, ໃຫ້ເຂົ້າເຖິງເປົ້າໝາຍ ທັງຢູ່ພາຍໃນ ແລະຕ່າງປະເທດ ດ້ວຍຄວາມຫຼາກຫຼາຍຮູບແບບສີສັນ ແລະມີເນື້ອໃນສ່ອງແສງໃຫ້ເຫັນທາດແທ້ທາງດ້ານຄຸນຄ່າທີ່ເປັນມໍລະດົກໄດ້ຢ່າງເລິກເຊິ່ງ, ກົມກືນ, ເຂົ້າໃຈງ່າຍ ແລະມີຊີວິດຊີວາ.

2). ການເສີມຂະຫຍາຍຄຸນຄ່າມໍລະດົກໂລກທາງດ້ານວັດຖະນະທຳ ເຂົ້າໃນພັດທະນາເສດຖະກິດຕ້ອງຕິດພັນແໜ້ນ ລະຫວ່າງ ການຫັນເປັນອຸດສາຫະກຳໃນຂະແໜງບໍລິການ ແລະການທ່ອງທ່ຽວ ກັບການຂຸດຄົ້ນຄຸນຄ່າລະດັບຈັກກະວານ ຂອງມໍລະດົກໂລກໃຫ້ເກີດປະໂຫຍດທາງດ້ານເສດຖະກິດສູງສຸດ;

3). ໂຄສະນາ ສຶກສາອົບຮົມປະຊາຊົນ, ພົນລະເມືອງ ໂດຍສະເພາະແມ່ນຄົນຮຸ່ນໜຸ່ມໃຫ້ຮັບຮູ້ເຂົ້າໃຈຢ່າງຖືກຕ້ອງ, ເລິກເຊິ່ງ ຕໍ່ກັບຄຸນຄ່າມໍລະດົກໂລກ ເພື່ອໃຫ້ເຂົາເຈົ້າສາມາດມີສ່ວນຮ່ວມເຂົ້າໃນການອະນຸລັກ, ປົກປັກຮັກສາ ແລະເສີມຂະຫຍາຍຄຸນຄ່າມໍລະດົກໂລກ ພ້ອມທັງສາມາດຊຸກຍູ້ສົ່ງເສີມເຂົ້າໃນການພັດທະນາເສດຖະກິດຢ່າງແຂງແຮງ.

4). ຕ້ອງເອົາໃຈໃສ່ໃນການອະນຸລັກ, ປົກປັກຮັກສາ ບັນດາຜະລິດຕະພັນ ແລະແຫຼ່ງມໍລະດົກໂລກ ໂດຍການຄົ້ນຄວ້າ ເພື່ອກຳນົດແນວທາງ ແລະແຜນຍຸດທະສາດອັນຈຳເປັນ ເພື່ອຮັບປະກັນໃຫ້ມໍລະດົກໂລກຄົງໄວ້ເຊິ່ງຄຸນຄ່າ ທີ່ເປັນຕົວແທນມໍລະດົກໂລກ, ຄວາມສົມບູນ ແລະຄວາມເປັນຂອງແທ້ດັ້ງເດີມ ໃຫ້ຄົງໄວ້ຢູ່ຄູ່ກັບສັງຄົມມະນຸດ.

5). ພັດທະນາໂຄງລ່າງພື້ນຖານ ແລະສິ່ງອຳນວຍຄວາມສະດວກຕ່າງໆ ເຮັດໃຫ້ຜູ້ທີ່ມີຄວາມຕ້ອງການເຂົ້າຊົມໃຊ້, ຢ້ຽມຊົມ ບັນດາຜະລິດຕະພັນ ແລະແຫຼ່ງມໍລະດົກໂລກ ໃຫ້ສາມາດເຂົ້າເຖິງໄດ້ທຸກຊ່ອງທາງຢ່າງສະດວກ.

6). ເພີ່ມທະວີຄວາມເອົາໃຈໃສ່ ຄຸ້ມຄອງ, ຕິດຕາມ, ກວດກາ ແລະສະຫຼຸບຖອດຖອນບົດຮຽນການຈັດຕັ້ງປະຕິບັດວຽກງານຢ່າງເປັນປົກກະຕິ;ພ້ອມທັງເອົາໃຈໃສ່ໃນການບຳລຸງ-ກໍ່ສ້າງຖັນແຖວພະນັກງານທີ່ເຮັດວຽກງານຕິດພັນກັບມໍລະດົກໂລກຢ່າງຄົບຊຸດ ເພື່ອສ້າງຂີດຄວາມສາມາດທາງດ້ານຄວາມຮູ້, ເຕັກນິກວິຊາການ ແລະຍົກສູງຄວາມຮັບຜິດຊອບ ຂອງພະນັກງານໃຫ້ສູງຂຶ້ນ.